ສົ່ງ: ທ່ານ ຫົວໜ້າສໍານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 10 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

ສໍານັກງານ ຄຄຊ
ເຂົ້າ ເລກທີ 734
ວັນທີ 22 JUL 2015
ໂທລະສັບ 021 217770

**ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈໍາເດືອນ 06/2015 ແລະ ທິດທາງແຜນການໃນຕໍ່ໜ້າ**

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດໍາເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈໍາເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ພົ້ນເດັ່ນແມ່ນ: ສໍາເລັດການເຜີຍແຜ່ເອກະສານສໍາຄັນຕ່າງໆ ເຊັ່ນ: ວັນກໍາມະກອນສາກົນ, ວັນຄ້າຍວັນເກີດຂອງທ່ານ ການມາກ, ວັນໄຊຊະນະດຽນບຽນຟູ, ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນຊຽງຂວາງ, ວັນວິລະກໍາໂຕນຄູກຢ່າງມະຫັດສະຈັນຂອງບັນດາຜູ້ນໍາພັກ ແລະ ແນວລາວສ້າງຊາດ; ຜ່ານການຈັດຕັ້ງປະຕິບັດດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: **ວຽກງານຄຸ້ມຄອງທະນາຄານທຸລະກິດ:** ❶ສໍາເລັດການອອກໃບອະນຸຍາດສ້າງຕັ້ງສະບັບດັດແກ້ໃຫ້ແກ່ທະນາຄານ First Comercial Bank LTD, ສາຂານະຄອນຫຼວງວຽງຈັນ; ❷ສໍາເລັດການອອກຂໍ້ຕົກລົງວ່າດ້ວຍການຕໍ່ກໍານົດເວລາໃບອະນຸຍາດສ້າງຕັ້ງຊົ່ວຄາວ ທະນາຄານກຸງເທບ ຈໍາກັດ (ມະຫາຊົນ) ສາຂາຈໍາປາສັກ, ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາກົດລະບຽບພາຍໃນຂອງທະນາຄານ Cathay United Bank ສາຂານະຄອນຫຼວງວຽງຈັນ; ❸ສໍາເລັດການລົງກວດກາຄວາມພ້ອມທາງດ້ານສະຖານທີ່ ກ່ອນການຍົກລະດັບຂຶ້ນເປັນທະນາຄານທຸລະກິດເຕັມຮູບແບບຂອງທະນາຄານ ທອງຄຳ ສາຂາລາວ; ❹ອອກແຈ້ງການກ່ຽວກັບການຮັກສາລະດັບຖານະເງິນຕາຕ່າງປະເທດປະຈໍາວັນທີ່ເກີນດຸນ-ຂາດດຸນ ເກີນຂອບເຂດທີ່ ທຫລ ກໍານົດ ຈໍານວນ 4 ທະນາຄານ; ❺ສໍາເລັດການລົງກວດທະນາຄານຮ່ວມທຸລະກິດ

ລາວ-ຫວຽດ ແລະ ທະນາຄານລາວກໍ່ສ້າງ ປະຈຳປີ 2014. **ວຽກງານຄຸ້ມຄອງສະຖາບັນການເງິນ:** ❶ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ບໍລິສັດ ໂຊກດີ ເຊົ່າສິນເຊື່ອ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ເມືອງກາສີ, ສສງ ເມືອງຫີນເຫີບ ແລະ ສສງ ເມືອງວັງວຽງ; ❷ສຳເລັດການລົງກວດກາສະຖານທີ່ຕັ້ງໃໝ່ຂອງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທົ່ງແກ້ວ; ❸ສຳເລັດການລົງກວດກາສະຖານທີ່ຕັ້ງຕົວຈິງຂອງຜູ້ຂໍສ້າງຕັ້ງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໄພວັນ;

2. ສຳເລັດການຈັດກອງປະຊຸມຕ່າງໆ ທີ່ພົ້ນເດັ່ນ ດັ່ງນີ້: ❶ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າຄັດເລືອກຜົນງານ 10 ປີ ຂອງພະນັກງານ ທຫລ, ❷ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ປະຈຳເດືອນ 4-5/2015, ❸ກອງປະຊຸມສ່ອງແສງວຽກງານສາຍລັດປະຈຳເດືອນ 4-5/2015, ❹ກອງປະຊຸມປຶກສາຫາລືກ່ຽວກັບການເປັນເຈົ້າພາບກອງປະຊຸມອາຊຽນ ແລະ ອາຊຽນ+3 ຂະແໜງທະນາຄານ ໃນປີ 2016, ❺ກອງປະຊຸມປຶກສາຫາລືສະພາບອັດຕາແລກປ່ຽນ ແລະ ການຊື້-ຂາຍເງິນຕາຕ່າງປະເທດ, ❻ກອງປະຊຸມກະກຽມບົດລາຍງານກ່ຽວກັບສະພາບພົ້ນເດັ່ນຂອງນະໂຍບາຍເງິນຕາ, ❼ກອງປະຊຸມຮ່າງບົດຄົ້ນຄວ້າການຫຼຸດອັດຕາດອກເບ້ຍ, ❽ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC) ຄັ້ງທີ 2, ❾ກອງປະຊຸມຄະນະຮັບຜິດຊອບວຽກງານການເຊື່ອມໂຍງອົງການການຄ້າໂລກ (WTO), ❿ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

3. ສຳເລັດການຈ່າຍໜີ້ສາມແຈ ໂຄງການລົງທຶນຂອງລັດ ຄັ້ງທີ 1 ທີ່ຍັງເຫຼືອ 2 ບໍລິສັດ ຈຳນວນ 90 ຕື້ກີບ ແມ່ນໄດ້ຈ່າຍໜີ້ສຳເລັດໃນເດືອນ 6/2015;

4. ສຳເລັດການສ້າງ ແລະ ຮັບຮອງນິຕິກຳກ່ຽວກັບການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC) ຈຳນວນ 6 ສະບັບ, ໂດຍທ່ານ ຜູ້ວ່າການ ຈຳນວນ 2 ສະບັບ;

5. ສຳເລັດການສ້າງເອກະສານລາຍງານການເງິນ ຂອງ ທຫລ ທົ່ວລະບົບ ປະຈຳເດືອນ 4-5/2015;

6. ໃນເດືອນ 6/2015 ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ສາມາດເກັບໜີ້ໄດ້ 894.308.000 ກີບ;

7. ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ຈຳນວນ 2 ສະບັບ, ປັດຈຸບັນ STR ມີທັງໝົດ 154 ສະບັບ.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ທະນາຄານໂລກ (WB) ໄດ້ປັບຫຼຸດການຄາດຄະເນການຂະຫຍາຍຕົວຂອງເສດຖະກິດໂລກ ປີ 2015 ຢູ່ລະດັບ 2,8% ຈາກ 3%. ສາເຫດເນື່ອງມາຈາກລາຄານ້ຳມັນດິບຍັງສົ່ງຜົນກະທົບຕໍ່ການສົ່ງອອກສິນຄ້າຂອງຫຼາຍປະເທດ ແລະ ປະຊາຄົມໂລກຕ້ອງກຽມຮັບມືກັບການປັບຂຶ້ນອັດຕາດອກເບ້ຍພື້ນຖານຂອງທະນາຄານກາງ ສ. ອາເມລິກາ (FED) ທີ່ຈະສົ່ງຜົນກະທົບຕໍ່ຕົ້ນທຶນການກູ້ຢືມຂອງປະເທດກຳລັງພັດທະນາ. ພ້ອມດຽວກັນນັ້ນ ທະນາຄານໂລກຍັງໄດ້ປັບຫຼຸດການຄາດຄະເນອັດຕາການຂະຫຍາຍຕົວທາງດ້ານເສດຖະກິດຂອງອາເມລິກາລົງ ຈາກ 3,1% ມາເປັນ 2,5% ເນື່ອງຈາກເສດຖະກິດຍັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ການແຂງຄ່າຂອງສະກຸນເງິນໂດລາສະຫະລັດ, ການຫຼຸດລົງຂອງລາຄາສິນຄ້າດ້ານພະລັງງານ ແລະ ບັນຫາໄພທຳມະຊາດ ຊຶ່ງສົ່ງຜົນກະທົບຕໍ່ການຂະຫຍາຍຕົວຂອງເສດຖະກິດ ແລະ ການຈ້າງງານ. ສະນັ້ນ, ທະນາຄານໂລກຈຶ່ງຮຽກຮ້ອງໃຫ້ທະນາຄານກາງອາເມລິກາ ຍືດເວລາການປັບຂຶ້ນອັດຕາດອກເບ້ຍພື້ນຖານອອກໄປຈົນເຖິງປີໜ້າ ພ້ອມທັງສະແດງຄວາມເປັນຫ່ວງຕໍ່ກັບພາກການເງິນຂອງປະເທດທີ່ກຳລັງປະເຊີນກັບຄວາມສ່ຽງສູງຂຶ້ນ ໂດຍສະເພາະແມ່ນຕະຫຼາດປະກັນໄພ ແລະ ຕະຫຼາດການເງິນ. ໃນຂະນະທີ່ ທະນາຄານໂລກໄດ້ປັບເພີ່ມທ່າອ່ຽງຄາດຄະເນອັດຕາການຂະຫຍາຍຕົວທາງດ້ານເສດຖະກິດ ຂອງປະເທດໄທ ປີ 2015 ຢູ່ໃນລະດັບ 3,5% ເພີ່ມ

ຂຶ້ນ 0,9% ທຽບໃສ່ປີຜ່ານມາ. ສາເຫດເນື່ອງຈາກລາຍຮັບພາກການທ່ອງທ່ຽວ ແລະ ການລົງທຶນພາກລັດ ທີ່ຈະເພີ່ມສູງຂຶ້ນຫຼາຍກວ່າ 10%. ຢ່າງໃດກໍຕາມ ທະນາຄານໂລກ ຄາດຄະເນວ່າພາກການສົ່ງອອກຂອງປະເທດຈະຍັງຂະຫຍາຍຕົວຊ້າ ຊຶ່ງຈະຢູ່ລະດັບ 0,5% ໃນປີ 2015 ແລະ ພາກການນຳເຂົ້າຈະຖືກຖອຍລົງ 2%;

ລາຄານ້ຳມັນໃນຕະຫຼາດໂລກ ຢູ່ທີ່ 59,92 ໂດລາ/ບາເຣວ ເພີ່ມຂຶ້ນ 2,31% ແລະ ລາຄາຄຳ ຢູ່ທີ່ 1.194,66 ໂດລາ/ອອນ ເພີ່ມຂຶ້ນ 0,16% ເມື່ອທຽບໃສ່ເດືອນຜ່ານມາ.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດ ລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 06/2015 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,21% ເພີ່ມຂຶ້ນ 0,02% ຈາກ 1,19% ໃນເດືອນ 05/2015;
- ຖານເງິນຕາປະຈຳເດືອນ 6/2015 ເພີ່ມຂຶ້ນ 524,75 ຕື້ກີບ ຫຼື 1,85% ທຽບໃສ່ເດືອນ 5/2015 ແລະ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.524,05 ຕື້ກີບ ຫຼື 35,13% ສາເຫດຕົ້ນຕໍ ຍ້ອນ ທຫລ ລ່ວງໜ້າບ້ວງອ່າຍໜີ້ສາມແຈ ຄັ້ງທີ 2 ຈຳນວນ 2.045,46 ຕື້ກີບ ແລະ ທຫລ ປ່ອຍສິນເຊື່ອໃຫ້ໂຄງການບຸລິມະສິດຂອງລັດ ຈຳນວນ 40 ລ້ານໂດລາ, ເຖິງແມ່ນວ່າ ທະນາຄານທຸລະກິດ ໂອນເງິນໄປຕ່າງປະເທດ ສຸດທິ 93,18 ລ້ານໂດລາ ແລະ ຖອນເງິນຝາກອອກນຳໃຊ້ 56,21 ລ້ານໂດລາ. ປະລິມານເງິນ M2 ເພີ່ມຂຶ້ນ 421,22 ຕື້ກີບ ຫຼື 0,74% ທຽບໃສ່ເດືອນ 5/2015 ແລະ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.217,69 ຕື້ກີບ ຫຼື 19,28%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 6/2015 ເຫັນວ່າເງິນກີບອ່ອນຄ່າ 0,10% ທຽບໃສ່ເງິນໂດລາ ແຕ່ແຂງຄ່າ 1,93% ທຽບໃສ່ເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດຫຍັບເຂົ້າຫາກັນ ສຳລັບເງິນກີບທຽບໃສ່ເງິນໂດລາ ຄື: ຈາກ 0,13% ມາເປັນ 0,11% ແຕ່ຫ່າງອອກຈາກກັນສຳລັບເງິນກີບທຽບໃສ່ເງິນບາດ ຈາກ 0,044% ມາເປັນ 0,51%. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າ 0,18% ທຽບກັບເງິນໂດລາ ແຕ່ແຂງຄ່າ 2,08% ທຽບໃສ່ເງິນບາດ;

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ໃນເດືອນ 6/2015 ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 5,71% ເນື່ອງຈາກປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາເພີ່ມຂຶ້ນ. ຄວາມຕ້ອງການຫຼາຍກວ່າການຕອບສະໜອງ ຊຶ່ງເຫັນໄດ້ຈາກ ທທກ ຂາຍສຸດທິ 150,39 ລ້ານໂດລາທຽບເທົ່າ, ໃນນັ້ນ ຂາຍໂດລາສຸດທິ 31,58 ລ້ານໂດລາ ແລະ ຂາຍເງິນບາດສຸດທິ 3.811,23 ລ້ານບາດ. ທຫລ ຂາຍສຸດທິ 157,29 ລ້ານໂດລາທຽບເທົ່າ, ໃນນັ້ນ ຂາຍໂດລາສຸດທິ 106,51 ລ້ານໂດລາ ແລະ ຂາຍເງິນບາດສຸດທິ 1.629,12 ລ້ານບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດ 15/06/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 48,861,95 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,16%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,34% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງ

ກວມເອົາ 50,73% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ 0,98% ຊຶ່ງກວມເອົາ 49,27% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດ 15/06/2015 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 43.226,27 ຕື້ກີບ ເພີ່ມຂຶ້ນ 0,31% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,95% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາ ກວມເອົາ 50,05% ຂອງສິນເຊື່ອທັງໝົດ;

ໃນເດືອນ 06/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 82,29 ຕື້ກີບ ເທົ່າກັບ 102,6% ຂອງແຜນການ ເພີ່ມຂຶ້ນ 1.144,93% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 55,16 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 7,57 ຕື້ກີບ, ສິນເຊື່ອ 3 ສ້າງ ຈຳນວນ 19,56 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 06/2015 ມີຈຳນວນ 2.287,96 ຕື້ກີບ ເພີ່ມຂຶ້ນ 2,31% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້ ໜີ້ປົກກະຕິ ກວມເອົາ 69,23% ແລະ ໜີ້ຕົ້ນທຶນຄົບກຳນົດສັນຍາຊຳລະ ກວມເອົາ 30,76% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 04/2015 ມີ ຈຳນວນ 2.977,48 ຕື້ກີບ (ຕົວເລກເບື້ອງຕົ້ນ) ເພີ່ມຂຶ້ນ 3,07% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5,29% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນ ຍ້ອນມາຈາກປັດໃຈພາຍໃນ ແລະ ພາຍນອກ ຄື: ພະນັກງານສິນເຊື່ອຂອງທະນາຄານເກັບກຳຂໍ້ມູນລູກຄ້າບໍ່ໄດ້ລະອຽດ, ການພິຈາລະນາການປ່ອຍສິນເຊື່ອຍັງບໍ່ທັນຮັດກຸມເທົ່າທີ່ຄວນ, ການໃກ້ຊິດຕິດແທດ ແລະ ການໃຫ້ຄຳປຶກສາແນະນຳລູກຄ້າກ່ຽວກັບການນຳໃຊ້ເງິນກູ້ໃຫ້ຖືກຕາມເປົ້າໝາຍ ອາດຍັງເຮັດບໍ່ໄດ້ດີ; ທຸລະກິດລູກຄ້າບໍ່ມີປະສິດທິພາບ ແລະ ບໍ່ມີປະສິດທິຜົນ. ພ້ອມດຽວກັນນີ້, ລູກຄ້າບໍ່ມີຄວາມຈິງໃຈໃນການຊຳລະເງິນກູ້ຄືນໃຫ້ທະນາຄານ, ສະພາບເສດຖະກິດພາຍໃນ ແລະ ພາຍນອກມີການປ່ຽນແປງ ເຮັດໃຫ້ທຸລະກິດບໍ່ເປັນໄປຕາມແຜນການ ແລະ ເປົ້າໝາຍ ແລະ ບາງທຸລະກິດຕິດພັນກັບງົບປະມານຂອງລັດ. ຊຶ່ງເກີດຈາກທະນາຄານເມແບັງ ສາຂາລາວ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານສົ່ງເສີມກະສິກຳ ແລະ ທະນາຄານຮ່ວມທຸລະກິດລາວ-ຫວຽດນາມ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

## 4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

### 4.1. <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.662 ສະບັບ ຫຼຸດລົງ 0,73% ເປັນເງິນຈຳນວນ 3.393,42 ຕື້ກີບ ເພີ່ມຂຶ້ນ 24,97% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 168 ຄັ້ງ ມີມູນຄ່າການໂອນ 593,19 ຕື້ກີບ ເພີ່ມຂຶ້ນ 0,81% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 28/05-27/06/2015 ມີການເຄື່ອນໄຫວຈຳນວນ 7.257 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 7.215 ຄັ້ງ ມີມູນຄ່າການໂອນ 1.570,81 ຕື້ກີບ ຫຼຸດລົງ 36,21% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 1.812 ຄັ້ງ ຈາກທັງໝົດ 33 ທະນາຄານ;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 36 ຄັ້ງ ມີມູນຄ່າ 185,56 ຕື້ກີບ ຫຼຸດລົງ 59,55% ທຽບໃສ່ເດືອນຜ່ານມາ;

---

[1] ເດືອນ 5 ແລະ 6/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ;

- **ສະກຸນເງິນໂດລາ:** ມີ 4 ທະນາຄານທີ່ເຮັດທຸລະກຳ ມີການເຄື່ອນໄຫວຈຳນວນ 3 ຄັ້ງ ມີມູນຄ່າໂອນ 200.500 ໂດລາສະຫະລັດ ຈາກທັງໝົດ 36 ທະນາຄານ ໃນນັ້ນມີ 1 ຕະຫຼາດຫຼັກຊັບ ແລະ BCONNEX;
- **ສະກຸນເງິນບາດ:** ມີການເຄື່ອນໄຫວ 3 ຄັ້ງ ມີມູນຄ່າໂອນ 4 ລ້ານບາດ ຈາກທັງໝົດ 36 ທະນາຄານ ໃນນັ້ນມີ 1 ຕະຫຼາດຫຼັກຊັບ ແລະ BCONNEX.

## 4.2 <u>ການຊື້-ຂາຍພັນທະບັດ</u>

ໃນເດືອນ 06/2015 ກະຊວງການເງິນມີການຈຳໜ່າຍພັນທະບັດບ່ວງລະດົມທຶນ ຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ (ບ່ວງ 1.000 ຕື້ກີບ ຊຸດທີ I) ຈຳນວນ 58 ຕື້ກີບ; ພາຍໃນເດືອນນີ້ພັນທະບັດກະຊວງການເງິນ ມີການໄຖ່ຖອນ ຈຳນວນ 35 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 4 ບ່ວງ ຊຶ່ງມີຍອດເຫຼືອ 6.103,40 ຕື້ກີບ ແລະ 90 ລ້ານໂດລາ (ບ່ວງດຸນດ່ຽງງົບປະມານ 200 ຕື້ກີບ, ບ່ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ 545 ຕື້ກີບ ແລະ 90 ລ້ານໂດລາ, ບ່ວງກະຊວງການເງິນຈຳໜ່າຍເອງເພື່ອລ້າງໜີ້ເກົ່າ 4.008,40 ຕື້ກີບ, ບ່ວງລະດົມທຶນຈາກທະນາຄານທຸລະກິດປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 1.350 ຕື້ກີບ).

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 06/2015 ບໍ່ມີການເຄື່ອນໄຫວ, ແຕ່ຈ່າຍດອກເບ້ຍພັນທະບັດຈຳນວນ 1,48 ລ້ານໂດລາ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 154 ລ້ານໂດລາ.

## 5. <u>ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.375,39 ຈຸດ ຫຼຸດລົງ 2,53% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1,42 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,43 ຕື້ກີບ ຫຼຸດລົງ 42,09% ທຽບໃສ່ເດືອນຜ່ານມາ. ໃນເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,06% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.093 ກີບ/ຮຸ້ນ ຫຼຸດລົງ 215 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ ມີປະລິມານຊື້-ຂາຍທັງໝົດ 150.914 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 920,12 ລ້ານກີບ ຫຼຸດລົງ 74,97% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 31,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,70%[2].
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.072 ກີບ/ຮຸ້ນ ຫຼຸດລົງ 376 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 847.309 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,99 ຕື້ກີບ ຫຼຸດລົງ 42% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 55,05% ຂອງມູນຄ່າຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].
- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.014 ກີບ/ຮຸ້ນ ຫຼຸດລົງ 286 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 105 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 0,84 ລ້ານກີບ ຫຼຸດລົງ 98,16% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.601 ກີບ/ຮຸ້ນ ຫຼຸດລົງ 194 ກີບ/ຮຸ້ນ ເມື່ອທຽບໃສ່ປີທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 421.786 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,51 ຕື້ກີບ ເພີ່ມຂຶ້ນ 198,41% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 11,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

## IV. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

ການຈັດຕັ້ງວຽກງານເກັບກູ້ໜີ້ສິນຂອງລູກຄ້າບາງລາຍຍັງບໍ່ທັນປະຕິບັດໄດ້ຕາມການຕົກລົງຂອງສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້, ການຄົ້ນຄວ້າເຊື່ອມຊຶມເອກະສານ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ, ການປະຕິບັດວຽກງານຂອງພະນັກງານຈຳນວນໜຶ່ງຍັງເປັນພະນັກງານໜຸ່ມນ້ອຍ ສ່ວນຫຼາຍແມ່ນປະຕິບັດຕາມການຊີ້ນຳລວມຂອງຂັ້ນເທິງ, ການປະຕິບັດລະບຽບລັດຖະກອນຍັງຊັກຊ້າ ເປັນຕົ້ນແມ່ນການປະຕິບັດໂມງເວລາເຂົ້າການ, ສະມາຊິກສາມອົງການຈັດຕັ້ງຈຳນວນໜຶ່ງ ຍັງຂາດຄວາມເປັນເຈົ້າການໃນການຈັດຕັ້ງການຮ່ວມຊີວິດຕາມກົດລະບຽບ ແລະ ການເຂົ້າຮ່ວມຂະບວນການຕ່າງໆ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ. ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນ ມີຄວາມຮັບຜິດຊອບສູງ. ຊຸກຍູ້ພະນັກງານໃຫ້ມີຄວາມເອົາໃຈໃສ່ຮຽນຮູ້ປະສົບການຕ່າງໆ ດ້ານວຽກງານວິຊາສະເພາະໃຫ້ມີຄວາມໜັກແໜ້ນກວ້າງຂວາງກວ່າເກົ່າ. ສູ້ຊົນເສີມຂະຫຍາຍດ້ານດີ ປັບປຸງແກ້ໄຂຂໍ້ຄົງຄ້າງດ້ານຕ່າງໆ ໃຫ້ຫຼຸດຖອຍເທື່ອລະກ້າວ. ເອົາໃຈໃສ່ປຸກລະດົມຊັກຊວນພະນັກງານ ໃຫ້ເຂົ້າຮ່ວມວຽກງານຂະບວນການຕ່າງໆຢ່າງເປັນຂະບວນຟົດຟື້ນ.

# ພາກທີ II

# ທິດທາງແຜນການໃນຕໍ່ໜ້າ

## I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດ ຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;

- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ສືບຕໍ່ຄົ້ນຄວ້າຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ, ດຳລັດວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ; ❷ສືບຕໍ່ຕິດຕາມຄວາມພ້ອມກ່ອນອອກໃບອະນຸຍາດຖາວອນໃຫ້ແກ່ ທະນາຄານແຄນນາເດຍ ລາວ ຈຳກັດ, ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂາປາກເຊ ແລະ ສາຂາຂອງທະນາຄານເອສທີ ຈຳກັດ ທີ່ແຂວງບໍ່ແກ້ວ; ❸ສືບຕໍ່ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ; ❹ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການ Basel II ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ດ້ວຍຫຼັກການ Basel II; ❺ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການຂາຍຫຼັກຊັບທີ່ໄດ້ຮັບຈາກການຊໍາລະໜີ້ຂອງທະນາຄານທຸລະກິດ (ຊໍາລະສະສາງຫຼັກຊັບຄ້ຳປະກັນ), ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄຳແນະນຳເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສຳລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❻ສືບຕໍ່ຄົ້ນຄວ້າ ແລະ ປັບປຸງຮ່າງລະບຽບການວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນ ຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບຢູ່ໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນຕ່າງປະເທດ; ສືບຕໍ່ຄົ້ນຄວ້າຮ່າງລະບຽບກ່ຽວກັບລະບຽບວ່າດ້ວຍປະກັນໄພການເງິນຈຸລະພາກ; ສືບຕໍ່ຮ່າງລະບຽບກ່ຽວກັບການຍຶດ ແລະ ອາຍັດຊັບທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍມາດຕາ 38, 39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ຮ່າງລະບຽບລະບົບໂອນເງິນມູນຄ່າສູງ ແລະ ມູນຄ່າຕ່ຳ (RTGS/ACH); ສືບຕໍ່ຄົ້ນຄວ້າຮ່າງລະບຽບວ່າດ້ວຍ Financial Service Provider ກ່ຽວກັບສະຖາບັນການເງິນ; ❼ກະກຽມຜ່ານເນື້ອໃນບົດແນະນຳການບັນທຶກບັນຊີເຄື່ອງມືອະນຸພັນທາງການເງິນ ຈຳນວນ 3 ສະບັບ ຄື: Interest Rate Swap, Forward Rate Agreemenent ແລະ Currency Option; ບົດແນະນຳການຈັດຕັ້ງປະຕິບັດລະບຽບການດຳເນີນງານຕະຫຼາດເປີດ;

- ຄົ້ນຄວ້າການຂໍອອກຮຸ້ນສາມັນເພີ່ມເຕີມທຶນ RO ແລະ PO ຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ;

- ຕິດຕາມການກະກຽມອອກຈຳໜ່າຍຫຼັກຊັບຂອງບໍລິສັດໄຟຟ້າ ນ້ຳເທີນ 2 ແລະ ບໍລິສັດຊີມັງລາວ ຈຳກັດ;

- ສືບຕໍ່ຕິດຕາມໂຄງການ Laos ATM Pool Switch (LAPS) ເຊັ່ນ: ການແຕ່ງຕັ້ງຄະນະນຳເອົາອຸປະກອນໂຄງການດັ່ງກ່າວ ເຂົ້າມາທາງບໍ່ເຕັນ ຂອງ ສປປ ລາວ ແລະ ກະກຽມເອກະສານຂໍອະນຸມັດນຳເອົາເຄື່ອງໂຄງການດັ່ງກ່າວນຳກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເພື່ອຂໍຍົກເວັ້ນພາສີອາກອນ;

- ກະກຽມເຜີຍແຜ່ວຽກງານອາຊຽນໃນຫົວຂໍ້: "ຜົນດີ ແລະ ຜົນເສຍຂອງການນຳໃຊ້ຫຼັກການ Positive, Negative List Approcah" ໃນການເຈລະຈາການເປີດເສລີການບໍລິການດ້ານການເງິນຂອງຂະແໜງການທະນາຄານ;
- ສືບຕໍ່ສະໜອງຂໍ້ມູນໃຫ້ແກ່ອົງການກວດສອບແຫ່ງລັດ ທີ່ລົງກວດ ທຫລ;
- ສືບຕໍ່ລາຍງານທຸລະກຳທີ່ມີລັກຊະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ



ດຣ. ສົມພາວ ໄຟສິດ